**Anti-Racism Policy**

**Information for parents and carers**

# ນະໂຍບາຍຕ້ານການແບ່ງແຍກເຊື້ອຊາດ

## ຂໍ້ມູນສຳລັບພໍ່ແມ່ ແລະ ຜູ້ດູແລ

ການແບ່ງແຍກເຊື້ອຊາດມີຜົນກະທົບຕໍ່ຄວາມເປັນຢູ່ທີ່ດີຂອງນັກຮຽນ, ການມີສ່ວນຮ່ວມໃນໂຮງຮຽນ ແລະ ຜົນການຮຽນ. ການແບ່ງແຍກເຊື້ອຊາດ ແລະ ການປະພຶດໃນການດູຖູກເຊື້ອຊາດແມ່ນບໍ່ໄດ້ຮັບການຍອມຮັບໃນໂຮງຮຽນຫຼວງ ຂອງ ລັດ NSW.

## ນະໂຍບາຍນີ້ແມ່ນກ່ຽວກັບຫຍັງ?

ນະໂຍບາຍ Anti-Racism Policy (ນະໂຍບາຍຕ້ານການແບ່ງແຍກເຊື້ອຊາດ) ສົ່ງເສີມການເຄົາລົບແລະຄວາມສາມັກຄີກົມກຽວກັນໃນສະພາບແວດລ້ອມຂອງໂຮງຮຽນ. ມັນມີຈຸດປະສົງເພື່ອຮັບປະກັນວ່າໂອກາດທາງການສຶກສາແມ່ນຍຸຕິທຳສຳລັບບັນດານັກຮຽນທຸກຄົນໂດຍບໍ່ຄຳນຶງເຖິງພູມຫຼັງຂອງ ວັທນະທັມ, ພາສາ ຫຼື ສາສນາຂອງພວກເຂົາ. ນະໂຍບາຍນີ້:

- ຮັບຮູ້ຜົນກະທົບຈາກການແບ່ງແຍກເຊື້ອຊາດ ຜົວພັນທີ່ມີຕໍ່ຊາວອາບໍຣິຈິໂນລແລະທໍເຣສເຕຣໄອແລນເດີ
- ຮັບປະກັນວ່າໂຮງຮຽນຍົກສູງຄວາມຄາດຫວັງຂອງນັກຮຽນທຸກຄົນ ແລະ ບໍ່ໃຫ້ນັກຮຽນກຸ່ມໃດຄົນໜຶ່ງຖືກຢຸດບໍ່ໃຫ້ບັນລຸຄວາມສາມາດອັນເຕັມທີ່ຂອງພວກເຂົາເນື່ອງຈາກພູມຫຼັງຂອງ ວັດທະນະທຳ, ສາດສະໜາ ຫຼື ພາສາ.
- ຮຽກຮ້ອງໃຫ້ສະມາຊິກທັງໝົດໃນຊຸມຊົນຂອງໂຮງຮຽນຄິດເຖິງພຶດຕິກຳຂອງຕົນເອງ ແລະ ໃຫ້ແນ່ໃຈວ່າການກະທຳຂອງພວກເຂົາບໍ່ສົ່ງຜົນໃຫ້ຄົນອື່ນປະສົບກັບການແບ່ງແຍກເຊື້ອຊາດ.
- ຮຽກຮ້ອງໃຫ້ພະນັກງານທັງໝົດເຮັດສຳເລັດການຝຶກອົບຮົມເພື່ອໃຫ້ພວກເຂົາເຂົ້າໃຈໃນຄວາມຮັບຜິດຊອບຂອງພວກເຂົາໃນການປ້ອງກັນການແບ່ງແຍກເຊື້ອຊາດ
- ຮຽກຮ້ອງໃຫ້ແຕ່ລະໂຮງຮຽນມີພະນັກງານຕິດຕໍ່ດ້ານຕ້ານການແບ່ງແຍກເຊື້ອຊາດທີ່ໄດ້ຜ່ານການຝຶກອົບຮົມ ມາແລ້ວ.

## ເຈົ້າຫນ້າທີ່ຕິດຕໍ່ດ້ານຕ້ານການແບ່ງແຍກເຊື້ອຊາດແມ່ນຫຍັງ?

ເຈົ້າຫນ້າທີ່ຕິດຕໍ່ດ້ານຕ້ານການແບ່ງແຍກເຊື້ອຊາດ (Anti-Racism Contact Officer (ARCO)) ແມ່ນຄູສອນທີ່ຖືກແຕ່ງຕັ້ງໂດຍທ່ານຄູໃຫຍ່ທີ່ຊ່ວຍໃນການນຳພາການສຶກສາດ້ານການຕ້ານການແບ່ງແຍກເຊື້ອຊາດໃນໂຮງຮຽນ. ARCO ຊ່ວຍເຫຼືອທ່ານຄູໃຫຍ່ໂດຍການໃຫ້:

- ການສະໜັບສະໜູນເພື່ອສ້າງຄວາມເຂົ້າໃຈຂອງພະນັກງານກ່ຽວກັບຜົນກະທົບຂອງການແບ່ງແຍກເຊື້ອຊາດກ່ຽວກັບການຮຽນຮູ້ແລະຄວາມເປັນຢູ່ທີ່ດີຂອງນັກຮຽນ
- ຄຳແນະນຳແກ່ນັກຮຽນ ແລະ ພະນັກງານກ່ຽວກັບວິທີຕອບຮັບເມື່ອພວກເຂົາເຫັນ ຫຼື ໄດ້ຍິນເຫດການການແບ່ງແຍກເຊື້ອຊາດ
- ຄຳແນະນຳກ່ຽວກັບບັນດາຍຸດທະສາດທີ່ໂຮງຮຽນສາມາດປະຕິບັດເພື່ອແກ້ໄຂການແບ່ງແຍກເຊື້ອຊາດ.

ARCO ໄດ້ຮັບການຝຶກອົບຮົມເພື່ອໃຫ້ຄຳແນະນຳແກ່ພໍ່ແມ່ແລະຜູ້ດູແລ, ແລະ ຄູອາຈານແລະນັກຮຽນກ່ຽວກັບຂັ້ນຕອນການແກ້ບັນຫາຈາກລາຍງານ ກ່ຽວກັບການແບ່ງແຍກເຊື້ອຊາດ. ຖ້າຖືກຮ້ອງຂໍ, ARCO ຍັງສາມາດເຮັດຫນ້າທີ່ເປັນ support person or advocate (ຜູ້ສະໜັບສະໜູນ ຫຼື ຜູ້ອອກສຽງແທນ) ໃນລະຫວ່າງຂະບວນການແກ້ໄຂບັນຫາ.

## ຂ້ອຍຄວນເຮັດແນວໃດຖ້າລູກຂອງຂ້ອຍປະສົບກັບການແບ່ງແຍກເຊື້ອຊາດຢູ່ໃນໂຮງຮຽນ?

ຖ້າລູກຂອງທ່ານກຳລັງປະສົບກັບການແບ່ງແຍກເຊື້ອຊາດຢູ່ໃນໂຮງຮຽນ, ທ່ານຄວນຊຸກຍູ້ໃຫ້ພວກເຂົາລາຍງານມັນກັບຄູຫຼືເຈົ້າຫນ້າທີ່ຕິດຕໍ່ດ້ານຕ້ານການແບ່ງແຍກເຊື້ອຊາດຂອງໂຮງຮຽນ, ຫຼື ທ່ານອາດຈະລາຍງານແທນລູກຂອງທ່ານກໍໄດ້.

## ຂ້ອຍຈະເຮັດລາຍງານກ່ຽວກັບການແບ່ງແຍກ ເຊື້ອຊາດຢູ່ໂຮງຮຽນໄດ້ແນວໃດ?

ສະມາຊິກຂອງຊຸມຊົນໂຮງຮຽນ, ລວມທັງພໍ່ແມ່ ແລະ  ຜູ້ດູແລ ທັງພະນັກງານແລະນັກຮຽນ, ສາມາດເຮັດ report (ລາຍງານ) ກ່ຽວກັບການແບ່ງແຍກເຊື້ອຊາດ. ລາຍງານກ່ຽວກັບເລື້ອງການແບ່ງແຍກເຊື້ອຊາດສາມາດຖືກລາຍງານຕໍ່ທ່ານຄູໃຫຍ່, ເຈົ້າ ຫນ້າທີ່ຕິດຕໍ່ດ້ານການຕ້ານການແບ່ງແຍກເຊື້ອຊາດ ຫຼື ພະນັກງານຄົນໃດຄົນໜຶ່ງ. ການລາຍງານສາມາດເຮັດໄດ້ໂດຍບຸກຄົນ, ໂດຍທາງອີເມລ ຫຼື ໂທລະສັບ, ແລະ ທາງອອນລາຍກໍໄດ້ດ້ວຍການໃຊ້ feedback and complaint form (ໃບຟອມສໍາລັບໃຫ້ການຕິຊົມແລະຮ້ອງຮຽນ) ຂອງກະຊວງ.

## ການແບ່ງແຍກເຊື້ອຊາດ ທາງອອນໄລນ໌ ເດ ຈະເປັນແນວໃດ?

ການແບ່ງແຍກເຊື້ອຊາດທີ່ກ່ຽວພັນກັບໂຮງຮຽນທີ່ເກີດຂຶ້ນທາງອິນເຕີເນັດ, ເຊັ່ນບັນດານັກຮຽນສະແດງອອກເຖິງການແບ່ງແຍກເຊື້ອຊາດຕໍ່ກັບນັກຮຽນອື່ນເປັນສ່ວນບຸກຄົນ ຫຼື ກຸ່ມວັດທະນະທໍາ, ຄວນຖືກລາຍງານໃຫ້ໂຮງຮຽນຊາບດັ່ງຂ້າງເທິງ. ສໍາລັບຄໍາແນະນໍາກ່ຽວກັບວິທີການຮັກສາຄວາມປອດໄພທາງອອນໄລນ໌, ໃຫ້ເບິ່ງ Online safety (ຄວາມປອດໄພທາງອອນໄລນ໌) ຢູ່ໃນ eSafety Commissioner website (ເວັບໄຊຕ໌ eSafety Commissioner).

## ຂ້ອຍສາມາດເອົາຂໍ້ມູນເພີ່ມເຕີມໄດ້ຢູ່ໃສ?

ສໍາລັບຂໍ້ມູນເພີ່ມເຕີມເບິ່ງ Anti-racism education (ການສຶກສາຕ້ານການແບ່ງແຍກເຊື້ອຊາດ).

## ການຊ່ວຍເຫຼືອດ້ານນາຍພາສາ

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍເວົ້າກັບໂຮງຮຽນ ຫຼື ນັດກັບພະນັກງານ, ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ເບີ 131 450 ແລະຂໍເອົານາຍພາສາໃນພາສາຂອງທ່ານ.

ບອກຜູ້ຮັບສາຍເບີໂທລະສັບຂອງໂຮງຮຽນແລະຜູ້ຮັບສາຍກໍຈະຕິດຕໍ່ໄປຫາໂຮງຮຽນ ແລະ ຊອກເອົານາຍພາສາໃນສາຍເພື່ອຊ່ວຍໃນການສົນທະນາຂອງທ່ານ.

ຖ້າທ່ານຕ້ອງການນາຍພາສາໃນລະຫວ່າງການປະຊຸມກັບພະນັກງານຂອງໂຮງຮຽນ, ຈົ່ງຂໍໃຫ້ໂຮງຮຽນຈັດຫາໃຫ້. ທາງໂຮງຮຽນຈະຈັດຫານາຍພາສາທີ່ມາແປຢູ່ກັບບ່ອນໃຫ້, ແປທາງອິນເຕີເນັດ ຫຼື ທາງໂທລະສັບ, ຂຶ້ນກັບຄວາມພ້ອມ. ທ່ານຈະບໍ່ຖືກເກັບຄ່າບໍລິການແປພາສາ.